# ການສ້າງແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ 5ປີ ຄັ້ງທີ X (2026-2030)

## ກອງປະຊຸມປະທານ ແລະ ປະທານຮ່ວມ ໜ່ວຍງານຂະແໜງການ

ວັນທີ 9 ຕຸລາ 2025

ສະເໜີໂດຍ: ທ່ານ ກະລຸນາ ນັນທະວົງດວງສີ
ຮອງຫົວໜ້າກົມແຜນການ
ກະຊວງການເງິນ

# ສາລະບານ

1. ການປັບປຸງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X (2026-2030)
2. ຈຸດຕົ້ນຕໍ ຂອງການປັບປຸງ ຈາກສະບັບທີ 4 ເປັນ 5
3. ຄວາມຄືບໜ້າຂອງການຮ່າງ ຂອບວຽກການຕິດຕາມ ແລະ ປະເມີນຜົນຂອງ ແຜນຄັ້ງທີ 10
4. ຍຸດທະສາດການເງິນ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ X (2026-2030)

# ການປັບປຸງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ (2026-2030)

# ການສັງລວມ ຄຳເຫັນ ໃສ່ ຮ່າງແຜນ 10, ສະບັບທີ 5 ປີ

**ຄຳເຫັນຂອງໜ່ວຍງານຂະແໜງການ:**

- ໄດ້ຮັບຄຳເຫັນຈາກ 10 ໜ່ວຍງານຂະແໜງການ ໂດຍແຍກເປັນແຕ່ລະໜ່ວນງານຂະແໜງການ
- ດຳເນີນການກວດກາ ຢ່າງລະອຽດກ່ຽວກັບຄຳເຫັນຂອງໜ່ວຍງານຂະແໜງການ;
- ຄຳເຫັນ ທີ່ ເປັນຄຳແນະນຳ, ຂໍ້ສະເໜີ ແລະ ການສັງເກດການ ມີທັງໝົດ 218 ຄຳເຫັນ;
- ຂໍ້ມູນ ທີ່ໄດ້ຈາກ ໜ່ວຍງານຂະແໜງການ ມີຄຳເຫັນເຈາະຈີງໃສ່ ເປົ້າໝາຍ,ແຜນວຽກຈຸດສຸມ ແລະ ນະໂຍບາຍ ທີ່ກຳນົດໃນແຜນ ຄັ້ງທີ

# ການສັງລວມ ຄຳເຫັນ ໃສ່ ຮ່າງແຜນ 10, ສະບັບທີ 5 ປີ

**ຄຳເຫັນຈາກໜ່ວຍງານຂະແໜງການ (SWG ) ທີ່ໄດ້ພິຈາລະນາແລ້ວ, ຈັດເປັນປະເພດ:**

1. ຄຳເຫັນທີ່ສັງລວມເຂົ້າແລ້ວ: ຄຳຄິດເຫັນຂອງ ໄດ້ລວມເຂົ້າໃນຮ່າງສະບັບທີ 4 ແລ້ວ, ພ້ອມດ້ວຍການອ້າງອີງເຖິງເລກໜ້າ, ແຜນວຽກຈຸດສຸມ ແລະ ຜົນໄດ້ຮັບທີ່ກ່ຽວຂ້ອງ;

1. ບໍ່ທັນສັງລວມເຂົ້າ: ຄຳຄິດເຫັນຂອງ ຈຳນວນໜຶ່ງບໍ່ໄດ້ຈັດເຂົ້າໃສ່ ຮ່າງສະບັບທີ 4 ຊຶ່ງໄດ້ລະບຸເຫດຜົນສຳລັບການທີ່ບໍ່ໄດ້ບັນຈຸເຂົ້າ

# ການສັງລວມ ຄຳເຫັນ ໃສ່ ຮ່າງແຜນ 10, ສະບັບທີ 5 ປີ

**ຕົວຢ່າງ 1: ຄຳເຫັນຂອງຂະແໜງການປົກຄອງ**

- ***ຈັດເຊື່ອມເຂົ້າເປົ້າໝາຍທີ 6, ແຜນວຽກຈຸດສຸມທີ 1, ໜ້າ 115-ໜ້າ 122 (ຮ່າງສະບັບທີ 3, ສະບັບພາສາລາວ)***
- **ຄຳເຫັນຂອງ GSWG:** "ໂດຍລວມ, ເປົ້າໝາຍທີ 6 ຈະຕ້ອງສອດຄ່ອງກັບການປ່ຽນແປງທີ່ກ່ຽວຂ້ອງກັບການປົກຄອງ ທີ່ຖືກຮັບຮອງຢູ່ໃນ ລັດຖະທຳມະນູນ ສະບັບປັບປຸງ. ຕົວຢ່າງ: ການສ້າງຕັ້ງອົງການບໍລິຫານໃໝ່ ຄື: ຕາແສງ"
- **ຄຳຕອບຂອງ ກົມແຜນການ:** ຄຳເຫັນດັ່ງກ່າວ ໄດ້ຮັບການບັນຈຸເຂົ້າຢູ່ໃນຮ່າງ ແຜນ 10, ສະບັບທີ 4
- **ການບັນຈຸເຂົ້າ:** ໜ້າ 127 ແລະ 128: "ຊຸກຍູ້ການສ້າງຕັ້ງອົງການບໍລິຫານຂັ້ນທ້ອງຖິ່ນໂດຍການກຳນົດຕາແສງເປັນອົງການບໍລິຫານ ລະດັບລຸ່ມສຸດ ເພື່ອສອດຄ່ອງກັບສະພາບຄວາມເປັນຈິງໃນປະຈຸບັນ ພ້ອມທັງເສີມສ້າງຄວາມເຂັ້ມແຂງໃຫ້ ບ້ານເປັນການຈັດຕັ້ງຂອງຊຸມຊົນທີ່ເຂັ້ມແຂງກວ່າ."

# ການສັງລວມ ຄໍາເຫັນ ໃສ່ ຮ່າງແຜນ 10, ສະບັບທີ 5 ປີ

## ຕົວຢ່າງ 2: ໜ່ວຍງານຂະແໜງການເສດຖະກິດມະຫາພາກ

- *ຂົງເຂດການປະຕິຮູບຫຼັກ ດ້ານເສດຖະກິດມະຫາພາກ ແລະ ໂຄງສ້າງ: ທົບທວນນະໂຍບາຍກ່ຽວກັບ ພາສີ*
- **ຄໍາເຫັນຂອງ MESWG:** "ທົບທວນການໃຫ້ນະໂຍບາຍດ້ານພາສີ ໂດຍສະເພາະໃນ ການລົງທຶນໂດຍກົງຂອງ ຕ່າງປະເທດ (FDI) ໂດຍອີງໃສ່ກົດໝ!ຍ-ລະບຽບ ທີ່ໂປ່ງໃສ ແລະ ມີການຊັ່ງຊາ ລະຫວ່າງ ຜົນໄດ້ຮັບ ແລະ ມູນຄ່າທີ່ ໃຫ້ນະໂຍບາຍ ຢ່າງລະມັດລະວັງ. ຫຼີກລ້ຽງການໃຫ້ສິ່ງຈູງໃຈທີ່ເປັນອັນສະເພາະກິດ ແລະ ມີການທົບທວນຄືນສິ່ງຈູມໃຈ ເປັນໄລຍະ (ດີທີ່ສຸດທຸກໆ 3-5 ປີ) ເພື່ອຮັບປະກັນວ່າ ນະໂຍບາຍຍັງສອດຄ່ອງກັບຈຸດປະສົງດ້ວຍມູນຄ່າທີ່ໃຫ້ ຍັງສົມ ເຫດສົມຜົນ".
- **ຄໍາຕອບຂອງ ກົມແຜນການ:** ຄໍາເຫັນຂອງ ໄດ້ຮັບການບັນຈຸ ແລະ ຢູ່ໃນຮ່າງແຜນ 10 ສະບັບທີ 4
- **ການບັນຈຸເຂົ້າ** – ໜ້າ 79: "ຄົ້ນຄວ້າສ້າງເຄື່ອງມືພາສີໃໝ່ ໂດຍສະເພາະບັນດາເຄື່ອງມືດ້ານພາສີສະເພາະທີ່ຕິດພັນ ກັບຂະ ແໜງການ, ການນໍາໃຊ້ຊັບພະຍາກອນທໍາມະຊາດ ແລະ ການປົກປັກຮັກສາສິ່ງແວດລ້ອມ". "ບັນດາມາດ ຕະການ ຈະຖືກຈັດຕັ້ງປະຕິບັດ ເພື່ອຮັບປະກັນໃຫ້ຫົວໜ່ວຍທຸລະກິດຮັບຮອງລະບົບບັນຊີແບບດຽວກັນ ແລະ ເຂົ້າ

# ຈຸດຕົ້ນຕໍ ຂອງການປັບປຸງ ຈາກສະບັບທີ 4 ເປັນ 5

# ຈຸດຕົ້ນຕໍ ຂອງການປັບປຸງ ຈາກສະບັບທີ 4 ເປັນ 5

**ການປັບປຸງດ້ານເນື້ອໃນ ແລະ ການຊັບປ່ຽນອງກາງານ**

| ຫົວຂໍ້ | ສະບັບທີ 4 | ສະບັບທີ 5 |
|---|---|---|
| ປັບປຸງ ຄຳຂວັນ | ຢູ່ໜ້າ 1, "ປຸກລະດົມຈິດໃຈຮັກຊາດ ແລະ ພັດທະນາ ຢ່າງແຂງແຮງ, ຕັ້ງໜ້າສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ, ນຳໃຊ້ທຸກທ່າແຮງຢ່າງມີປະສິດທິຜົນ, ພັດທະນາເສດຖະກິດ-ສັງຄົມຕາມທິດວ່ອງໄວ, ສີຂຽວ ແລະ ຍືນຍົງ". | ຢູ່ໜ້າ 1: "ປຸກລະດົມຈິດໃຈຮັກຊາດ ແລະ ພັດທະນາ ຢ່າງແຂງແຮງ, ຕັ້ງໜ້າສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ, ນຳໃຊ້ທຸກທ່າແຮງຢ່າງມີປະສິດທິຜົນ, ພັດທະນາເສດຖະກິດ-ສັງຄົມຕາມທິດວ່ອງໄວ, ສີຂຽວ ແລະ ຍືນຍົງ". |
| ການປັບຄຳເວົ້າ ເພື່ອເນັ້ນການປະເມີນການຈັດຕັ້ງປະຕິບັດແຜນ ຄັ້ງທີ 9 ເພື່ອຮັບປະກັນຄວາມຮອບດ້ານ ແລະ ຮັດກຸມ | ໜ້າ 3: ຂໍ້ 1: ແມ່ນເລີ່ມເຂົ້າເນື້ອໃນຂອງເປົ້າໝາຍທີ 1 ຂອງແຜນຄັ້ງທີ ໄປເລີຍ. | ໜ້າ 2, ເພີ່ມຂໍ້ 1: "ຕີລາຄາທິດທາງລວມ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX.." |

# ຈຸດຕົ້ນຕໍ ຂອງການປັບປຸງ ຈາກສະບັບທີ 4 ເປັນ 5 (ຕໍ່)

## ການປັບປຸງຫຼັກ ຂອງສະບັບທີ 5

- ປັບໃຫ້ສອດຄ່ອງກັບ ຍຸດທະສາດ 10 ປີ (2026-2035) ຂອງລັດຖະບານ ແລະ ວິໄສທັດຮອດປີ 2055.
- ບັນຈຸເອົາ ການເນັ້ນໜັກເຖິງຄວາມມຸ່ງໝັ້ນທີ່ຈະສືບຕໍ່ທິດທາງຂອງແຜນ ຄັ້ງທີ IX, ເປັນຕົ້ນ: 4 ບຸກທະລຸ ເພື່ອຍົກສູງປະສິດທິພາບການຄຸ້ມຄອງລັດ
- ປັບປຸງ ແລະ ຈັດລຽງຄືນ 7 ທິດທາງລວມ ເພື່ອເປັນບ່ອນອີງແກ່ການວາງແຜນ ແລະ ຈັດຕັ້ງປະຕິບັດ ໂດຍເນັ້ນໃນການວາງແຜນໄລຍະຍາວ ແລະ ເນັ້ນການປະຕິບັດທີ່ເປັນຮູບປະທຳໃຫ້ຫຼາຍຂຶ້ນ.
- ບັນຈຸເອົາທິດທາງດ້ານນະໂຍບາຍທີ່ຈະປັບປຸງ ເພື່ອການກຽມພ້ອມ ຂອງ ສປປ ລາວ ໃຫ້ແກ່ການຂ້າມຜ່ານ ໃນການຫຼຸດພົ້ນອອກຈາກປະເທດດ້ອຍພັດທະນາ ແລະ ພັນທະອື່ນ.
- ປັບປຸງບັນດາແຜນວຽກຈຸດສຸມ ແລະ ກິດຈະກຳ ທີ່ຍັງບໍ່ຄົບຖ້ວນໃນຮ່າງແຜນ ສະບັບທີ 5.
- ປັບປຸງ ແລະ ປັບປ່ຽນຕາມບັນດາຂົງເຂດທີ່ໄດ້ຮັບການສະເໜີແນະນຳ ເພື່ອເຮັດໃຫ້ເນື້ອໃນສົມບູນຂຶ້ນ.



NEXT

Made by ChatGPT for PowerPoint

# ຄວາມຄືບໜ້າຂອງການຮ່າງ ຂອບ ວຽກການຕິດຕາມ ແລະ ປະເມີນ ຜົນຂອງ ແຜນຄັ້ງທີ 10

# 1. ພາບລວມ

**ຂອບຕິດຕາມ-ປະເມີນຜົນ ຂອງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ປະກອບມີ:**

- **93 ຕົວຊີ້ບອກລະດັບເປົ້າໝາຍ**
- **52 ຕົວຊີ້ບອກລະດັບແຜນວຽກຈຸດສຸມ**
- **77 ຄຳຖະແຫຼງການ / ບໍ່ແມ່ນຕົວຊີ້ບອກ**
- **222 ຕົວຊີ້ບອກທັງໝົດ**

NEXT

Made by ChatGPT for PowerPoint

# 2. ຂັ້ນຕອນການທົບທວນ

ການຈັດວາງ ແລະ ຈັດປະເພດ





ປະເມີນຄຸນນະພາບ

ການກວດກາຄວາມສອດຄ່ອງ



ລະບຸຈຸດຊ້ຳຊ້ອນ ແລະ ຊ່ອງຫວ່າງ



ສັງລວມ ແລະ ປະສານງານ



NEXT

Made by ChatGPT for PowerPoint

# ການປັບປຸງຕົວຊີ້ບອກ

## ການທົບທວນ ແລະ ປັບປຸງທຸກຕົວຊີ້ບອກດ້ວຍການໃຊ້ການວິເຄາະແບບ SMART

| No. | Indicator | Unit | Level of measurement |
|---|---|---|---|
| Outcome 1: Self-Sufficient Economy Built on Development Potentials, Ensuring Stability, C | | | |
| 1 | GNI per capita | US $ | Outcome |
| 2 | EVI | % | Outcome |
| 3 | Annual GDP per capita | US $ | Outcome |

| Means of verification | | | | |
|---|---|---|---|---|
| **Specific** | **Measurability** | **Achievability** | **Relevant to the goal** | **Time-bound** |
| Continuous Expansion, High Quality and Sustainable Growth | | | | |
| Well-defined measure and unit. | Quantifiable with unit and baseline/target. | Baseline is higher than the target in 2030. | Aligned with Goal/Focus Area. | Target year/timeframe specified. |
| Well-defined measure and unit. | Quantifiable with unit and baseline/target. | Baseline, target, and timeframe present for feasibility planning. | Aligned with Goal/Focus Area. | Target year/timeframe specified. |
| Well-defined measure and unit. | Quantifiable with unit and baseline/target. | Baseline, target, and timeframe present for feasibility planning. | Aligned with Goal/Focus Area. | Target year/timeframe specified. |

# ການປັບປຸງຕົວຊີ້ບອກ

## ຕົວຢ່າງການທົບທວນ ແລະ ການປັບປຸງຕົວຊີ້ບອກ

| No. | Indicator | Unit | Level of measurement | Means of verification | | | | |
|---|---|---|---|---|---|---|---|---|
| | | | | Specific | Measurability | Achievability | Relevant to the goal | Time-bound |
| 12 | Average crop production per year: | | Output | Well-defined measure and unit. | Quantifiable with unit and baseline/target. | Baseline, target, and timeframe present for feasibility planning. | Yes, but output oriented | Target year/timeframe specified. |
| 12.1 | Coffee | Ton/Year | Output | Well-defined measure and unit. | Quantifiable with unit and baseline/target. | Baseline, target, and timeframe present for feasibility planning. | Yes, but output oriented | Target year/timeframe specified. |
| 12.2 | Feed corn | Ton/Year | Output | Well-defined measure and unit. | Quantifiable with unit and baseline/target. | Baseline, target, and timeframe present for feasibility planning. | Yes, but output oriented | Target year/timeframe specified. |
| 12.3 | Casava | Miliion tons/Year | Output | Well-defined measure and unit. | Quantifiable with unit and baseline/target. | Baseline, target, and timeframe present for feasibility planning. | Yes, but output oriented | Target year/timeframe specified. |

| General Comments | Recommendations (Including propose an alternative indicator) | SDG/Other relevant Global Recognised |
|---|---|---|
| This is output level indicator and not fully aligned with the expected Focus Area 1, Goal 1 | Recomend to remove this indicator | No |
| This is output level indicator and not fully aligned with the expected Focus Area 1, Goal 1 | Recomend to remove this indicator | No |
| This is output level indicator and not fully aligned with the expected Focus Area 1, Goal 1 | Recomend to remove this indicator | No |
| This is output level indicator and not fully aligned with the expected Focus Area 1, Goal 1 | Recomend to remove this indicator | No |
| This is output level indicator and not fully aligned with the expected Focus Area 1, Goal 1 | Recomend to remove this indicator | No |

# ຂັ້ນຕອນຕໍ່ໜ້າ

- **ຍົກສູງຄວາມເປັນເຈົ້າ ແລະ ກວດກາຄວາມຖືກຕ້ອງ**
  - ປັບປຸງໃຫ້ສອດຄ່ອງກັບ ແຜນສະບັບທີ 5.
  - ສົມທົບກັບບັນດາກົງຈັກລັດ ເພື່ອໃຫ້ສະໜອງແຜນຂອງຂະແໜງການຕົນ ສະບັບປັບປຸງ.

- **ປັບປຸງຂອບຕິດຕາມໃຫ້ກະທັດຮັດ**
  - ລວມຕົວຊີ້ບອກທີ່ຊໍ້າກັນ ແລະ ຄ້າຍຄືກັນ.
  - ປັບປຸງຕົວຊີ້ບອກທີ່ເວົ້າເປັນລັກສະນະກິດຈະກໍາ ຫຼື ຂະບວນການ ໃຫ້ເປັນຕົວຊີ້ບອກຂັ້ນຂະແໜງການ, ຮັກສາໄວ້ສະເພາະຂັ້ນເປົ້າໝາຍ.
  - ໃຫ້ແນ່ໃຈວ່າແຕ່ລະເປົ້າໝາຍ ແລະ ແຜນວຽກຈຸດສຸມ ມີຢ່າງໜ້ອຍໜຶ່ງຕົວຊີ້ບອກທີ່ສາມາດວັດແທກໄດ້.

- **ປັບປຸງ ແລະ ເສີມຄວາມແຂງແຮງໃຫ້ຕົວຊີ້ບອກ**
  - ປັບປຸງຕົວຊີ້ບອກທີ່ມີລັກສະນະເປັນ "ຄໍາເວົ້າ" (ຄວາມໝາຍກວ້າງເກີນໄປ ຫຼື ບໍ່ສາມາດວັດແທກໄດ້) ທີ່ບໍ່ຊັດເຈນ ໃຫ້ເປັນຕົວຊີ້ບອກແບບ ທີ່ມີຕົວເລກຊັດເຈນ, ຂໍ້ມູນປີຖານ, ເປົ້າໝາຍ ແລະ ແຫຼ່ງຂໍ້ມູນ.
  - ແກ້ໄຂເປົ້າໝາຍທີ່ບໍ່ຖືກຕ້ອງ (ເຊັ່ນ: ອັດຕາການຕາຍຂອງແມ່ຄວນຫຼຸດລົງ, ບໍ່ແມ່ນເພີ່ມຂຶ້ນ).

- **ປັບໃຫ້ສອດຄ່ອງກັບມາດຕະຖານ**
  - ສົ່ງເສີມການນໍາໃຊ້ຕົວຊີ້ບອກທີ່ໄດ້ຮັບການຍອມຮັບຈາກສາກົນ (SDGs, LDC, WB, ADB) ເພື່ອໃຫ້ທຽບກັບສາກົນໄດ້.
  - ຮັບປະກັນຄວາມສອດຄ່ອງໃນລະດັບແຜນວຽກຈຸດສຸມ ແລະ ເປົ້າໝາຍ.

# ຍຸດທະສາດການເງິນ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ X (2026-2030)

# ຄວາມຈຳເປັນຂອງຍຸດທະສາດການເງິນ

**ຈຸດປະສົງ:** ຮັບປະກັນຄວາມສອດຄ່ອງລະຫວ່າງເປົ້າໝາຍຂອງແຜນພັດທະນາ ແລະ ແຫຼ່ງທຶນທີ່ມີຕົວຈິງ, ປະເມີນຊ່ອງຫວ່າງດ້ານການເງິນ ແລະ ກຳນົດມາດຕະການແກ້ໄຂດ້ານນະໂຍບາຍ ແລະ ການບໍລິຫານຄຸ້ມຄອງເພື່ອອັດຊ່ອງຫວ່າງດ້ານການເງິນ.

## 6 ເປົ້າໝາຍບູລິມະສິດ ແຜນການ 5 ປີ ຄັ້ງທີ

- **ເປົ້າໝາຍທີ 1:** ສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ນຳໃຊ້ທ່າແຮງເພື່ອເຮັດໃຫ້ເສດຖະກິດມີສະຖຽນລະພາບ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ
- **ເປົ້າໝາຍທີ 2:** ພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບສູງ ແລະ ສາມາດນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ
- **ເປົ້າໝາຍທີ 3:** ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ, ຕົວເມືອງ ແລະ ຊົນນະບົດໄດ້ຮັບການພັດທະນາຢ່າງສົມຄູ່ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ຫຼຸດລົງເທື່ອລະກ້າວ
- **ເປົ້າໝາຍທີ 4:** ປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໃຫ້ມີຄວາມຍືນຍົງ ແລະ ສາມາດກຽມພ້ອມຮັບມືກັບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດຕ່າງໆ
- **ເປົ້າໝາຍທີ 5:** ການເຊື່ອມໂຍງ-ເຊື່ອມຈອດກັບພາກພື້ນ ແລະ ສາກົນຢ່າງກວ້າງຂວາງ ແລະ ມີປະສິດທິຜົນ
- **ເປົ້າໝາຍທີ 6:** ການຄຸ້ມຄອງ-ບໍລິຫານລັດມີປະສິດທິພາບ, ການເມືອງມີສະຖຽນລະພາບ, ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ຍຸຕິທຳ ແລະ ສີວິໄລ

## ຍຸດທະສາດການເງິນ

- ຄວາມຕ້ອງການດ້ານການເງິນ
- ຊັບພະຍາກອນທີ່ມີ
- ຊ່ອງຫວ່າງດ້ານການເງິນ
- ທາງເລືອກດ້ານນະໂຍບາຍ
- ຂັ້ນຕອນການຈັດຕັ້ງປະຕິບັດ

# ການເຕີບໂຕເສດຖະກິດ 2026-2030

- ຄາດໝາຍສູ້ຊົນຂອງລັດຖະບານ
- ການເຕີບໂຕສະເລ່ຍຂອງ GDP: 5.5%
- ມີການປະຕິຮູບ ແລະ ການລົງທຶນ ທີ່ຂັບເຄື່ອນການເຕີບໂຕເສດຖະກິດສູງໃນລະດັບຂຶ້ນ. ສົມມຸດຖານນີ້ ສອດຄ່ອງກັບຄາດໝາຍດ້ານເສດຖະກິດ ແລະ ການພັດທະນາລວມທີ່ລັດຖະບານກຳນົດໄວ້

# ຄາດຄະເນຊ່ອງຫວ່າງດ້ານການເງິນ

- ຄວາມຕ້ອງການດ້ານການລົງທຶນ (2026–2030): US$17 ຕື້ (~20% ຂອງ GDP)
- ແຫຼ່ງທຶນທີ່ສະໜອງໄດ້: US$~9 ຕື້ (ພາຍຫຼັງຫັກການຊໍາລະໜີ້ ແລະ ເງິນເດືອນ)
- **ຊ່ອງຫວ່າງດ້ານການເງິນ:** US$~8 ຕື້ (~10% ຂອງ GDP)



# ຄວາມຕ້ອງການດ້ານການລົງທຶນສໍາລັບ ແຜນການ 5 ປີ ຄັ້ງທີ

| ຂະແໜງການ / ຂົງເຂດບູລິມະສິດ | ຄາດຄະເນຄວາມຕ້ອງການ ການລົງທຶນ 2026–2030 |
|---|---|
| | ກໍລະນີທີ 1 |
| ໂຄງລ່າງພື້ນຖານ (ການຂົນສົ່ງ, ພະລັງງານ, ການເຊື່ອມຈອດ) | $6.5 ຕື້ |
| ຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ ແລະ ຄວາມຍືນຍົງດ້ານສິ່ງແວດລ້ອມ | ~$5.5 ຕື້ |
| ທຶນມະນຸດ (ການສຶກສາ ແລະ ສາທາລະນະສຸກ) | ~$3.5 ຕື້ |
| ກະສິກໍາ, ປ່າໄມ້ ແລະ ການພັດທະນາຊົນນະບົດ | $1.0 ຕື້ |
| ການຄຸ້ມຄອງ-ບໍລິຫານລັດ ແລະ ຂີດຄວາມສາມາດຂອງສະຖາບັນ | ~$0.5 ຕື້ |
| ໂຄງການພັດທະນາຂະແໜງສັງຄົມ (ເຊັ່ນ: ຄວາມສະເໝີພາບຍິງ-ຊາຍ, ການປົກປ້ອງທາງສັງຄົມ) | ~$0.3 ຕື້ |
| ຄວາມຕ້ອງການດ້ານການລົງທຶນທັງໝົດ (ປະມານ) | $ 17 ຕື້ |

# ສະພາບການ ແລະ ທ່າອ່ຽງດ້ານການເງິນ

- **ການເງິນພາກລັດພາຍໃນ:** ລາຍຮັບຢູ່ໃນລະດັບ ~10–11% ຂອງ, ປະມານ 50% ຖືກນຳໃຊ້ເຂົ້າໃນການຈ່າຍເງິນເດືອນ ແລະ ການຊຳລະໜີ້.
- **ການເງິນສາກົນ ODA:** ຢູ່ໃນລະດັບ ~$600 ລ້ານ/ປີ ສ່ວນໃຫຍ່ສະໜອງການເງິນເພື່ອປະຕິບັດໂຄງການ; ທ່າອ່ຽງ ທົ່ວໂລກຫຼຸດລົງ, ການຫຼຸດພົ້ນອອກຈາກ ຫຼັງປີ-2026 ອາດເຮັດໃຫ້ເງື່ອນໄຂການກູ້ຢືມເຂັ້ມງວດຫຼາຍຂຶ້ນ.
- **ການເງິນພາກເອກະຊົນພາຍໃນ:** ເປັນຜູ້ຂັບເຄື່ອນເສດຖະກິດສ່ວນໃຫ່ຍ ແຕ່ການເຂົ້າເຖິງສິນເຊື່ອຍັງທ້າທາຍ; ຕະຫຼາດທຶນຍັງບໍ່ໄດ້ຮັບການພັດທະນາເທົ່າທີ່ຄວນ.
- **ການເງິນພາກເອກະຊົນສາກົນ:** ການລົງທຶນໂດຍກົງຈາກຕ່າງປະເທດ (FDI) ມີຄວາມຜັນຜວນ ແລະ ສ່ວນໃຫຍ່ຢູ່ໃນຂະແໜງພະລັງງານ/ບໍ່ແຮ່; ມີໂຄງການໃໝ່ເກີດຂຶ້ນໃນຂະແໜງສີຂຽວ/ພະລັງງານທົດແທນ; ການຖືກຈັດເຂົ້າຢູ່ໃນບັນຊີສີເທົາຂອງ ເພີ່ມຄວາມສ່ຽງຕໍ່ຄວາມເຊື່ອໝັ້ນໃນການລົງທຶນ.

# ທາງເລືອກດ້ານນະໂຍບາຍ

**ການເງິນພາກລັດພາຍໃນ**

- ຂະຫຍາຍຖານເກັບລາຍຮັບອາກອນ
- ຫຼຸດຜ່ອນການຍົກເວັ້ນອາກອນ
- ປັບປຸງອາກອນມູນຄ່າເພີ່ມ/ອາກອນດິຈິຕອນ ໃຫ້ທັນສະໄໝ
- ຈັດລຽງບູລິມະສິດຄືນໃໝ່ເພື່ອໃຊ້ຈ່າຍເຂົ້າໃນຂະແໜງສາທາລະນະສຸກ/ການສຶກສາ/ການປ່ຽນແປງດິນຟ້າອາກາດ
- ຮັບປະກັນການເຊື່ອມໂຍງລະຫວ່າງແຜນງົບປະມານ ແລະ ບູລິມະສິດຂອງແຜນພັດທະນາ

**ການຄຸ້ມຄອງໜີ້ສິນ**

- ປັບໂຄງສ້າງກຳນົດເວລາຊຳລະໜີ້
- ສືບຕໍ່ຮັບປະກັນຄວາມໂປ່ງໃສ ແລະ ການກູ້ຢືມຢ່າງຮອບຄອບ

**ການເງິນພາກລັດສາກົນ**

- ສ້າງຄວາມເຂັ້ມແຂງການປະສານງານ ລະຫວ່າງບັນດາກະຊວງກ່ຽວຂ້ອງ.
- ປັບປຸງຂັ້ນຕອນການອະນຸມັດ/ການເບີກຈ່າຍ ໃຫ້ມີປະສິດທິພາບ.
- ຈັດສັນ ໃຫ້ສອດຄ່ອງກັບບູລິມະສິດຂອງ ແຜນພັດທະນາ (ສາທາລະນະສຸກ, ການສຶກສາ, ການປ່ຽນແປງດິນຟ້າອາກາດ) ຢ່າງໜັກແໜ້ນຫຼາຍຂຶ້ນ.
- ຄົ້ນຄວ້າຊ່ອງທາງໃນການກູ້ຢືມແບບຜ່ອນຜັນ ແລະ ການເງິນແບບປະສົມປະສານ ໂດຍສະເພາະພາຍຫຼັງການຫຼຸດພົ້ນອອກຈາກ LDC.

**ການເງິນພາກເອກະຊົນສາກົນ**

- ປັບປຸງສະພາບແວດລ້ອມການດຳເນີນທຸລະກິດ ແລະ ເພີ່ມທະວີຄວາມໂປ່ງໃສດ້ານລະບຽບການ.
- ສ້າງຄວາມຫຼາກຫຼາຍ ຫັນປ່ຽນຈາກການສຸມໃສ່ຂະແໜງບໍ່ແຮ່/ພະລັງງານ ໄປສູ່ຂະແໜງກະສິກຳ, ອຸດສາຫະກຳ ແລະ ພະລັງງານທົດແທນ.
- ສະໜັບສະໜູນການມີສ່ວນຮ່ວມ ແລະ ການລົງທຶນຮ່ວມ ຂອງຄົນເຊື້ອຊາດລາວຢູ່ຕ່າງປະເທດ.

**ການເງິນນະວັດຕະກຳໃໝ່ ແລະ ການປ່ຽນແປງດິນຟ້າ**

- ທົດລອງພັນທະບັດສີຂຽວ ແລະ ເຄື່ອງມືດ້ານການເງິນອື່ນໆທີ່ຕິດພັນກັບການປ່ຽນແປງດິນຟ້າອາກາດ.
- ພັດທະນາມາດຕະການເງິນກາກບອນ ແລະ ການເງິນທີ່ມີນະວັດຕະກຳອື່ນໆ.
- ຂະຫຍາຍການຮ່ວມມືພາກລັດ-ພາກເອກະຊົນ (PPP) ແລະ ການເງິນແບບປະສົມປະສານ.
- ສົ່ງເສີມການປະສານງານຜ່ານ ສູນການເຊື່ອມສານການເງິນເພື່ອການປ່ຽນແປງດິນຟ້າອາກາດ ແລະ ຍືນຍົງ.

# ມາດຕະການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງບໍລິຫານ

### ຄະນະຊີ້ນຳລະດັບຊາດວ່າດ້ວຍຍຸດທະສາດການເງິນ

- ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ເລກທີ 120/ນຍ, ລົງວັນທີ ສິງຫາ 2024
- ກະຊວງສະເໜີປັບປຸງຄະນະ: ລັດຖະມົນຕີກະຊວງການເງິນ ເປັນຫົວໜ້າຄະນະ, ໂດຍມີບັນດາຮອງລັດຖະມົນຕີກະຊວງກ່ຽວຂ້ອງເປັນຄະນະ
- ຄະນະຊີ້ນຳລວມ ໃຫ້ທິດທາງລວມໃນການຈັດຕັ້ງປະຕິບັດ ແລະ ຕິດຕາມຄວາມຄືບໜ້າ
- ແຕ່ງຕັ້ງກອງເລຂາລະດັບຊາດ

### ສູນການເງິນສີຂຽວ

- ມີໜ້າທີ່ເປັນໃຈກາງປະສານງານ ການເງິນເພື່ອການປ່ຽນແປງດິນຟ້າອາກາດ ແລະ ຍືນຍົງ ເພື່ອການປະສານງານດ້ານວິຊາການ
- ຮັບປະກັນຄວາມສອດຄ່ອງລະຫວ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ງົບປະມານ ແລະ ການສະໜອງທຶນໃຫ້ຂະແໜງການ

### ການຮ່ວມມື ແລະ ການສ້າງຂີດຄວາມສາມາດ

- ຂະບວນການໂຕະມົນ
- ສ້າງຂີດຄວາມສາມາດຢ່າງຕໍ່ເນື່ອງໃຫ້ແກ່ກະຊວງ ແລະ ອົງການປົກຄອງທ້ອງຖິ່ນ (ການວາງແຜນ, ການຄຸ້ມຄອງທີ່ອີງໃສ່ຜົນໄດ້ຮັບ (RBM), ການເງິນ)
- ລະດົມການຊ່ວຍເຫຼືອດ້ານວິຊາການໂດຍຜ່ານ ສູນການເງິນສີຂຽວ ແລະ ບັນດາໜ່ວຍງານຂະແໜງການ

# ຂໍຂອບໃຈ